**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************************

ກະຊວງ ຖະແຫລງຂ່າວ-ວັດທະນະທຳ ເລກທີ 715/ຖວ

# ຂໍ້ກຳນົດ

## ວ່າດ້ວຍການຄຸ້ມຄອງລິຂະສິດການຜະລິດ ແລະ ຈຳໜ່າຍກາແຊັດ-ແຜ່ນສຽງ-ຟີມຮູບເງົາ ກ່ຽວກັບການສະແດງສິລະປະຂະແໜງຕ່າງໆ ໃນ ສ.ປ.ປ.ລາວ

- *ອີງຕາມ ມາດຕາ 14 ແລະ 19 ຂອງ ລັດຖະທຳມະນູນແຫ່ງ ສ.ປ.ປ.ລາວ.*
- *ອີງຕາມ ມາດຕາ 59 ແລະ ມາດຕາ 127 ກົດໝາຍ ອາຍາ ແຫ່ງ ສ.ປ.ປ.ລາວ.*
- *ອີງຕາມ ກົດໝາຍລິຂະສິດຊັບສິນທາງປັນຍາລະຫວ່າງຊາດ ຊຶ່ງໄດ້ເຊັນກັນທີ່ ກຸງປາຣີ ຊຶ່ງ ສ.ປ.ປ.ລາວ ໄດ້ເຂົ້າຮ່ວມເປັນປະເທດພາຄີ.*
- *ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງກະຊວງຖະແຫລງ ຂ່າວແລະ ວັດທະນະທຳ ສະບັບເລກທີ 25/ນຍ ລົງວັນທີ 26 / 5 / 1999.*

## ລັດຖະມົນຕີອອກຂໍ້ກຳນົດ

## ໝວດທີ I

## ວ່າດ້ວຍຄຳນິຍາມກ່ຽວກັບລິຂະສິດ-ພາຫະນະ ແລະ ຜູ້ຜະລິດຈຳໜ່າຍຜະລິດຕະພັນ ການສະແດງສິລະປະຕ່າງໆ

**ມາດຕາ 1**: ລິຂະສິດ ໝາຍເຖິງຜົນງານການປະດິດສ້າງ ແລະ ຜະລິດຕະພັນກ່ຽວກັບການສະແດງສິລະປະຂະແໜງຕ່າງໆ ຈາກພູມປັນຍາຂອງເລົ່າສິລະປິນ ແລະ ຜູ້ລົງທຶນສ້າງສັນ, ຊຶ່ງໄດ້

ຂຶ້ນທະບຽນລິຂະສິດ ແລະ ໄດ້ຮັບມອບໝາຍສັນທະເປັນຜູ້ສືບທອດມໍລະດົກ ດັ່ງ ກ່າວຢ່າງຖືກຕ້ອງ, ຊຶ່ງຜູ້ອື່ນບໍ່ມີສິດລັກໂລບ ປອມແປງ ແລະລ່ວງລະເມີດຢ່າງເດັດຂາດ.

**ມາດຕາ 2**: ຜູ້ປະດິດສ້າງ, ຜູ້ຜະລິດ ແລະ ຈຳໜ່າຍ ແມ່ນສິລະປິນທຸກຂະແໜງ, ຜູ້ລົງທຶນ, ເຈົ້າຂອງບໍລິສັດຫ້າງຮ້ານຂາຍຍົກ-ຂາຍຍ່ອຍ ເຈົ້າຂອງຫ້ອງອັດສຽງ, ຫ້ອງອັດກ່າຍ ຫ້ອງຖ່າຍທຳຫ້ອງຕັດຕໍ່ ພາບສຽງ ແລະ ອື່ນໆ.

**ມາດຕາ 3:** ພາຫະນະການຜະລິດ ໄດ້ແກ່ວັດຖຸເຕັກນິກທັງໝົດ ທີ່ນຳໃຊ້ເຂົ້າໃນການຜະລິດກາແຊັດ-ແຜ່ນສຽງຟີມຮູບເງົາ ເຊັ່ນ: ກາແຊັດ, ແຜ່ນສຽງ, ຈັກອັດສຽງ-ຈັກກ່າຍ-ຈັກຖ່າຍທຳ ແລະ ເຄື່ອງຕັດຕໍ່ເປັນຕົ້ນ.

**ມາດຕາ 4**: ຜະລິດຕະພັນດັ່ງກ່າວ ຄື: ກາແຊັດ-ແຜ່ນສຽງ-ຟີມຮູບເງົາທຸກປະເພດ ທີ່ບັນຈຸເນື້ອໃນການສະແດງຕ່າງໆ ເຊັ່ນ: ເພງຮ້ອງ-ດົນຕີ-ຂັບລຳ-ຟ້ອນ-ລະຄອນ, ລຳເລື້ອງ, ກາຍຍະສິນ, ຕະຫລົກຊວນຫົວ ແລະ ອື່ນໆ ທີ່ຜະລິດຂຶ້ນຢູ່ພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ.

## ໝວດທີ II
## ວ່າດ້ວຍຄວາມໝາຍສຳຄັນ ໃນການຄຸ້ມຄອງລິຂະສິດ ແລະ ການຜະລິດ-ຈຳໜ່າຍກາແຊັດ-ແຜ່ນສຽງ-ຟີມຮູບເງົາ ກ່ຽວກັບການສະແດງສິລະປະໃນ ສ.ປ.ປ.ລາວ

**ມາດຕາ 5:** ບົດປະພັນ ແລະ ຜະລິດຕະພັນ ກ່ຽວກັບການສະແດງສິລະປະຕ່າງໆ ແມ່ນພາຫະນະອັນແຫລມຄົມ ໃນການປຸກລະດົມ ແລະ ສຶກສາອົບຮົມໃຫ້ຄົນມີແນວຄິດຮັກຊາດ ຮັກລະບອບໃໝ່ ເສີມສ້າງມານະຈິດ ແລະ ອຸດົມການໃນການປົກປັກ ແລະ ສ້າງສາພັດທະນາ ແລະ ນຳພາປະເທດຊາດກ້າວຂຶ້ນສູ່ຄວາມຈະເລີນຮັ່ງມີ, ສັງຄົມສີວິໄລ ແລະ ຍຸຕິທຳ.

1.1. ປະກອບສ່ວນຟື້ນຟູເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ຊຸກຍູ້ຂະບວນການເຄື່ອນໄຫວ ວຽກງານສິລະປະວັດທະນະທຳ ໃຫ້ມີບາດກ້າວຂະຫຍາຍຕົວ ຮັບປະກັນລັກສະນະຊາດ ປະຊາຊົນ ແລະ ກ້າວໜ້າ;

1.2. ສ້າງບັນຍາກາດເບີກບານມ່ວນຊື່ນຟົດຟື້ນປະຕິວັດ ແລະ ຄວາມສາມັກຄີປອງດອງ ໃນໝູ່ປະຊາຊົນລາວບັນດາເຜົ່າ ແລກປ່ຽນວັດທະນະທຳ ແລະ ເສີມສ້າງຄວາມສາມັກຄີມິດຕະພາບກັບນາໆ ຊາດ;

1.3. ສ້າງສູນທອນທັດ ແລະ ວັດທະນະທຳອັນຈີບງາມ ລະຫວ່າງຄົນກັບຄົນ, ຄົນກັບທຳມະຊາດ, ສ້າງສະຕິສຳນຶກອະນຸລັກຮັກສາສະພາບແວດລ້ອມ ແລະ ທຳມະຊາດ;

1.4. ການປະກອບສ່ວນສ້າງວຽກເຮັດງານທຳຫລຸດຜ່ອນຄວາມທຸກຍາກຫລ້າຫລັງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 6:** ຕ້ານ ແລະ ສະກັດກັ້ນວັດທະນະທຳປະຕິການ, ຊອດກະຈາລາມົກອານາຈານ ທີ່ຝືນກັບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ທີ່ຈະເປັນການເບື່ອເມົາຖົ້ມແຖວຊາວໜຸ່ມເຍົາວະຊົນ ແລະ ທຳລາຍຄວາມໝັ້ນຄົງຂອງຊາດໃນສະເພາະໜ້າ ແລະ ຍາວນານ.

## ໝວດທີ III
## ວ່າດ້ວຍຈຸດປະສົງລະດັບຄາດໝາຍ

**ມາດຕາ 7:** ຂໍ້ກຳນົດສະບັບນີ້ ມີຈຸດປະສົງເພື່ອເຮັດໃຫ້ການຄຸ້ມຄອງມະຫາພາກທາງດ້ານສິລະປະວັດທະນະທຳ ໂດຍສະເພາະແມ່ນການຄຸ້ມຄອງລິຂະສິດ-ການຜະລິດ ແລະ ຈຳໜ່າຍກາແຊັດ-ແຜ່ນສຽງ ແລະ ຟີມຮູບເງົາ ກ່ຽວກັບການສະແດງສິລະປະຕ່າງໆ ທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ໃຫ້ເຂົ້າສູ່ລະບຽບກົດໝາຍ, ສອດຄ່ອງກັບແນວທາງນະໂຍບາຍ ຂອງ ພັກ ແລະ ລັດຖະບານ ແຫ່ງ ສ.ປ.ປ.ລາວ.

**ມາດຕາ 8:** ສຶກສາອົບຮົມ ແລະ ສ້າງສະຕິສຳນຶກອັນຖືກຕ້ອງແກ່ເຫລົ່າສິລະປິນ ຕະຫລອດເຖິງຜູ້ລົງທຶນຜະລິດ-ຈຳໜ່າຍ ແລະ ຜູ້ບໍລິໂພກຢູ່ໃນທົ່ວສັງຄົມເຫັນໄດ້ພັນທະຂອງຕົນໃນການປະກອບສ່ວນປົກປັກຮັກສາ ແລະ ຟື້ນຟູເສີມຂະຫຍາຍມູນເຊື້ອສິລະປະວັດທະນະທຳ ທີ່ເປັນເອກະລັກຂອງຊາດໃຫ້ຍືນຍົງຄົງຕົວ ແລະ ກ້າວຫນ້າທັນສະໄໝ.

**ມາດຕາ 9:** ເພື່ອປົກປ້ອງສິດທິ ແລະ ຜົນປະໂຫຍດອັນຊອບທຳຂອງນັກປະດິດຄິດແຕ່ງ, ນັກສະແດງ, ຜູ້ລົງທຶນສ້າງສັນໃນການຜະລິດ-ຈຳໜ່າຍຜະລິດຕະພັນສິລະປະວັດທະນະທຳ ໃຫ້ເປັນລະບຽບຮຽບຮ້ອຍ ແລະ ສະເໝີພາບຕໍ່ໜ້າກົດໝາຍ, ຕີຖອຍປະກົດການຫຍໍ້ທໍ້ສວຍໂອກາດ, ລັກໂລບປອມແປງ ແລະ ສໍ້ໂກງລິຂະສິດຂອງຜູ້ອື່ນໃຫ້ໝົດໄປ. ສ້າງທ່ວງທ່າອັນໃໝ່ໃຫ້ແກ່ວົງການບັນເທີງຂອງປະເທດເຮົາ ກ້າວໜ້າຂະຫຍາຍຕົວທັງດ້ານປະລິມານ - ຄຸນນະພາບ ແລະ ໄດ້ມາດຖານສາກົນ.

## ໝວດທີ IV
## ວ່າດ້ວຍລະບຽບການຄຸ້ມຄອງລິຂະສິດ ການສ້າງຕັ້ງບໍລິສັດ, ຫ້າງຮ້ານ ແລະ ການກວດຜ່ານ

**ມາດຕາ 10:** ທຸກພາກສ່ວນທີ່ມີຈຸດປະສົງຢາກສ້າງຕັ້ງບໍລິສັດຫ້າງຮ້ານ, ຫ້ອງອັດສຽງ, ຫ້ອງອັດກ່າຍຫ້ອງຖ່າຍທຳ ແລະ ຕັດຕໍ່ພາບສຽງຕ່າງໆ ຕ້ອງມີໃບຢັ້ງຢືນຄວາມຊຳນານງານເພື່ອປະກອບອາຊີບ ຫລື ນັກຊ່ຽວຊານທາງດ້ານສິລະປະ ແລະ ເຕັກນິກຂະແໜງໃດໜຶ່ງມາສັງກັດບໍລິສັດ ( ເວົ້າສະເພາະບໍລິສັດຜະລິດ ).

10.1 ຕ້ອງໄດ້ຮັບອະນຸຍາດການສ້າງຕັ້ງບໍລິສັດ, ຂຶ້ນທະບຽນການຄ້າ ແລະ ປະຕັງພາສີຢ່າງຖືກຕ້ອງຄົບຖ້ວນ ຈາກອົງການຄຸ້ມຄອງມະຫາພາກທີ່ກ່ຽວຂ້ອງ ຈຶ່ງມີສິດຈັດຕັ້ງ ແລະ ເຄື່ອນໄຫວໄດ້.

**ມາດຕາ 11**: ທຸກບົດປະພັນທີ່ເປັນລິຂະສິດ, ຕ້ອງເປັນຜົນງານການປະດິດແຕ່ງດ້ວຍຕົນເອງ ບົດປະພັນທີ່ກ່າຍ ຫລື ອອກແບບອ້ອຍຕ້ອຍນັ້ນ ຈະບໍ່ຖືໄດ້ວ່າເປັນລິຂະສິດ.

11.1 ທຸກບົດປະພັນ ແລະ ຜະລິດຕະພັນທີ່ໄດ້ຮັບການປົກປ້ອງໃນທາງກົດໝາຍຕ້ອງຂຶ້ນທະບຽນລິຂະສິດ ຈາກອົງການຄຸ້ມຄອງທາງດ້ານວັດທະນະທຳ ພ້ອມທັງສົ່ງບົດປະພັນ ແລະ ຜະລິດຕະພັນນັ້ນໆ ໃຫ້ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ໄວ້ເປັນຫລັກຖານທາງການ;

11.2 ບົດປະພັນທີ່ບໍ່ແມ່ນລິຂະສິດຂອງຕົນເອງ ຊຶ່ງເຈົ້າຂອງຍັງຢູ່ພາຍໃນ ຫລື ຕ່າງປະເທດ, ຍັງມີຊີວິດ ຫລື ເສັຍຊີວິດໄປແລ້ວກໍຕາມ, ຜູ້ທີ່ນຳໄປຜະລິດ ແລະ ຈຳໜ່າຍຕ້ອງໄດ້ຂໍອະນຸຍາດຈາກເຈົ້າຂອງ ຫລື ພີ່ນ້ອງຊັ້ນຈຳ ທີ່ໄດ້ຮັບສັນທະໃນການສືບທອດມໍລະດົກຈາກເຈົ້າຈອງບົດປະພັນນັ້ນໆ ຢ່າງຖືກຕ້ອງ ( ທາງການຈຶ່ງຈະອະນຸຍາດໃຫ້ນຳໃຊ້ໄດ້ );

11.3 ສຳລັບບົດປະພັນ ແລະ ຜະລິດຕະພັນ ທີ່ບໍ່ມີຜູ້ຄຸ້ມຄອງລິຂະສິດ ທີ່ຖືກຕ້ອງຊອບທຳຕາມລະບຽບກົດໝາຍນັ້ນ, ຈະໄດ້ຮັບຮອງເອົາເປັນສົມບັດລວມຂອງຊາດ ໂດຍການຄຸ້ມຄອງດູແລຈາກອົງການຄຸ້ມຄອງທາງດ້ານວັດທະນະທຳ, ເພື່ອສືບຕໍ່ປົກປ້ອງລິຂະສິດ ແລະ ນຳໃຊ້ເພື່ອເປັນປະໂຫຍດ ໃນການພັດທະນາ ສິລະປະວັດທະນະທຳ ຂອງຊາດ.

**ມາດຕາ 12**: ທຸກບົດປະພັນ ແລະ ຜະລິດຕະພັນ ທີ່ໄດ້ນຳໄປເຜີຍແຜ່ຜະລິດ ແລະ ຈຳໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ, ຕ້ອງກວດຜ່ານເນື້ອໃນ ແລະ ຮູບການສິລະປະ, ຄຸນນະພາບເຕັກນິກ ຈາກອົງການຄຸ້ມຄອງ ທາງດ້ານວັດທະນະທຳ ຈຶ່ງປະຕິບັດໄດ້.

**ມາດຕາ 13**: ພາຫະນະ-ອຸປະກອນ ທຸກປະເພດທີ່ນຳມາຮັບໃຊ້ການຜະລິດ ແລະ ຈຳໜ່າຍ ຕ້ອງຜ່ານການນຳເຂົ້າ ຕາມລະບຽບກົດໝາຍ ໂດຍມີເອກະສານຢັ້ງຢືນການນຳເຂົ້າ ຈາກເຈົ້າໜ້າທີ່ກ່ຽວຂ້ອງຢ່າງຖືກຕ້ອງ.

## ໝວດທີ V
## ວ່າດ້ວຍລະບຽບການເຄື່ອນໄຫວຂອງບໍລິສັດຫ້າງຮ້ານ ຫ້ອງອັດສຽງ-ຫ້ອງອັດກ່າຍ-ຫ້ອງຖ່າຍທຳ ແລະ ຕັດຕໍ່ກາແຊັດ-ແຜ່ນສຽງ ແລະ ຟີມຮູບເງົາ.

**ມາດຕາ 14**: ຫ້າມບໍ່ໃຫ້ບໍລິສັດ, ຫ້າງຮ້ານ, ຫ້ອງອັດສຽງ-ຫ້ອງອັດກ່າຍ, ຫ້ອງຖ່າຍທຳ, ນັບທັງຮ້ານຂາຍຍົກ-ຂາຍຍ່ອຍ ຮ່ວມມືກັບຜູ້ອື່ນ ຫລື ກະທຳດ້ວຍຕົນເອງ ໃນການນຳເອົາບົດປະພັນ ຫລື ຜະລິດຕະພັນຕ່າງໆ ທັງຈາກພາຍໃນ ແລະ ຕ່າງປະເທດ ທີ່ບໍ່ໄດ້ຮັບການກວດຜ່ານຈາກອົງການຄຸ້ມຄອງທາງດ້ານວັດທະນະທຳ ແລະ ບໍ່ໄດ້ຮັບອະນຸຍາດ

ຈາກເຈົ້າຂອງລິຂະສິດໄປຜະລິດ ຫລື ຈຳໜ່າຍ, ສະແດງ ຫລື ນຳໃຊ້ໃນການໂຄສະນາ ໃນທາງທຸລະກິດຢ່າງເດັດຂາດ.

**ມາດຕາ 15**: ບຸກຄົນ, ບໍລິສັດຫ້າງຮ້ານທີ່ມີຈຸດປະສົງ ນຳເອົາຜະລິດຕະພັນກ່ຽວກັບການສະແດງສິລະປະທຸກປະເພດຈາກຕ່າງປະເທດ ນັບທັງຂອງຄົນລາວທີ່ຢູ່ຕ່າງປະເທດມາຜະລິດ ແລະ ຈຳໜ່າຍຢູ່ໃນ ສ.ປ.ປ.ລາວ ຕ້ອງຂໍອະນຸຍາດນຳເຂົ້າ ຈາກອົງການຄຸ້ມຄອງທາງດ້ານວັດທະນະທຳ ແລະ ຕ້ອງນຳເອົາແຕ່ຜະລິດຕະພັນທີ່ເປັນຂອງແທ້ ( ອໍຣິຈິໂນລ ) ເຂົ້າມາຈຳໜ່າຍ ( ເວັ້ນເສັຍແຕ່ໄດ້ຮັບມອບໝາຍລິຂະສິດຢ່າງຖືກຕ້ອງ ຈາກບໍລິສັດຕົ້ນສັງກັດເທົ່ານັ້ນ ).

**ມາດຕາ 16**: ຫ້າມບໍ່ໃຫ້ນຳເອົາບົດປະພັນ ຫລື ຜະລິດຕະພັນຕ່າງໆ ທັງຈາກພາຍໃນ ແລະ ຕ່າງປະເທດ ທີ່ມີເນື້ອໃນຝືນກັບແນວທາງນະໂຍບາຍ ແລະ ລະບຽບກົດໝາຍຂອງ ສ.ປ.ປ.ລາວ ຫລື ສະແດງເຖິງຄວາມລາມົກອານາຈານມົ້ວສຸມ ແລະ ໂປ້ເປືອຍທາງເພດ ມາຜະລິດ ແລະ ຈຳ ໜ່າຍໃນທົ່ວ ສ.ປ.ປ.ລາວ ຢ່າງເດັດຂາດ.

**ມາດຕາ 17**: ການນຳເຂົ້າ ຫລື ສົ່ງອອກບົດປະພັນ ຫລື ຜະລິດຕະພັນຕ່າງໆ ກ່ຽວກັບການສະແດງສິລະປະທຸກຂະແໜງ ໂດຍຜ່ານຊາຍແດນທາງບົກ-ທາງນ້ຳ ທາງອາກາດ ແລະ ທາງໄປສະນີ ຫລື ຜ່ານອິນເຕີແນັດຕ້ອງໄດ້ຮັບການອະນຸມັດຈາກເຈົ້າໜ້າທີ່ໆ ກ່ຽວຂ້ອງເຊັ່ນ: ອົງການວັດທະນະທຳ-ພາສີ ນັບທັງເຈົ້າຂອງລິຂະສິດນັ້ນໆ ຈື່ງງມີສິດນຳເຂົ້າ ຫລື ສົ່ງອອກໄດ້.

**ມາດຕາ 18**: ການເປີດເພງ-ຂັບລຳ ສາຍວິດີໂອ-ວີຊີດີ ແລະ ຟີມຮູບເງົາກ່ຽວກັບການສະແດງຂອງຕ່າງປະເທດ ຢູ່ພາຍໃນຮ້ານຄ້າ ຫລື ສະຖານທີ່ສາທາລະນະຕ່າງໆ ບໍ່ຄວນເປີດສຽງດັ່ງໂພດ ຫລື ລົ້ນໄປ ລົ້ນມາ ກາຍຂອບເຂດ, ຊຶ່ງເປັນການລົບກວນ ຫລື ສົ່ງເສີມ-ສ້າງຄ່ານິຍົມວັດທະນະທຳຂອງຕ່າງປະເທດ ( ເວັ້ນເສັຍແຕ່ ເປັນການທົດລອງຄຸນນະພາບສິນຄ້າຕໍ່ລູກຄ້າບາງຄັ້ງ ຄາວ ).

**ມາດຕາ 19**: ຫ້າມບໍ່ໃຫ້ຜະລິດ ແລະ ຈຳໜ່າຍສິນຄ້າທີ່ບໍ່ໄດ້ມາດຕະຖານ, ປອມແປງທາງດ້ານເຕັກນິກ ແລະ ຄຸນນະພາບທາງດ້ານສິລະປະ - ທຸກຜະລິດຕະພັນທີ່ນຳອອກເຜີຍແຜ່ຕ້ອງຕິດສະແຕມ ຕິດຍີ່ຫໍ້ ແລະ ຊື່ຫ້າງຮ້ານບໍລິສັດ ຢູ່ໃນທຸກໆ ຜະລິດຕະພັນຂອງຕົນ.

19.1 ການຊື້ຂາຍຜະລິດຕະພັນແຕ່ລະຄັ້ງ ຕ້ອງມີເອກະສານນຳສົ່ງສິນຄ້າຢ່າງຖືກຕ້ອງ ແລະ ຄົບຖ້ວນ.

## ໝວດທີ VI
## ວ່າດ້ວຍສັນຍາກ່ຽວກັບບົດປະພັນ-ນັກຮ້ອງ ແລະ ຜະລິດຕະພັນຕ່າງໆ

**ມາດຈາ 20**: ທຸກການຊື້ຂາຍບົດປະພັນ ແລະ ຜະລິດຕະພັນ ລະຫວ່າງ ຜູ້ປະດິດແຕ່ງ, ຜູ້ສະແດງ, ຜູ້ຜະລິດ ແລະ ຈຳໜ່າຍ ນັບທັງຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງມີສັນຍາຜູກພັນຮັດກຸມຊັດເຈນ ໂດຍໄດ້ຮັບການຢັ້ງຢືນຈາກອົງການຄຸ້ມຄອງມະຫາພາກທີ່ກ່ຽວຂ້ອງ.

20.1 ຄູ່ສັນຍາທຸກຝ່າຍຕ້ອງປະຕິບັດຕາມສັນຍາຢ່າງເຂັ້ມງວດ, ຖ້າຝ່າຍໃດຫາກລະເມີດ ແລະ ບິດບ້ຽວສັນຍາດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ໃຊ້ແທນຄ່າເສັຍຫາຍອີກຝ່າຍໜຶ່ງຕາມສັນຍາ.

**ມາດຕາ 21**: ບຸກຄົນ, ບໍລິສັດ, ຫ້າງຮ້ານທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຈະນຳເອົາບົດປະພັນທຸກປະເພດ ເພື່ອໄປຈັດພິມສະແດງ ຫລື ຜະລິດ ແລະ ຈຳໜ່າຍ ຈ້ອງຂໍອະນຸຍາດ ແລະ ເສັຍຄ່າລິຂະສິດ ແລະ ໄດ້ຮັບການອະນຸມັດຈາກອົງການຄຸ້ມຄອງມະຫາພາກທີ່ກ່ຽວຂ້ອງ. ຕ້ອງລະບຸຊື່ຈອງຜູ້ແຕ່ງ, ບອກແຈ້ງເພງ-ຂັບລຳຂອງທ້ອງຖິ່ນ ແລະ ເຜົ່າຊົນຕ່າງໆຂອງລາວ.

21.1 ຜູ້ທີ່ນຳເອົາບົດປະພັນໄປນຳໃຊ້ ບໍ່ມີສິດປ່ຽນແປງເນື້ອໃນ ແລະ ຮູບການສິນລະປະຕ່າງໆຕາມໃຈຊອບ ( ເວັ້ນເສັຍແຕ່ໄດ້ຮັບການເຫັນດີຈາກຜູ້ແຕ່ງ ).

**ມາດຕາ 22**: ບໍລິສັດຫ້າງຮ້ານ ແລະ ບຸກຄົນຕ່າງໆ ທີ່ມີຈຸດປະສົງຈະສົ່ງອອກ ຫຼື ນຳເຂົ້າສິລະປິນດ່ຽວ, ວົງດົນຕີຄະນະສິລະປະ ແລະ ອື່ນໆ ໄປສະແດງຢູ່ຕ່າງປະເທດ ຫຼື ມາສະແດງ ຢູ່ໃນ ສ.ປ.ປ.ລາວ ຕ້ອງໄດ້ຂໍອະນຸຍາດຢ່າງຖືກຕ້ອງ ຈາກອົງການຄຸ້ມຄອງມະຫາພາກທີ່ກ່ຽວຂ້ອງ ຈຶ່ງສາມາດເຄື່ອນໄຫວໄດ້.

22.1 ການສະແດງເທິງເວທີ, ຖ່າຍທຳວີດີໂອ-ຮູບເງົາ ແລະ ອື່ນໆ ຕ້ອງນຸ່ງຖື ແລະ ປະພຶດສະແດງອອກໃນທ່າທີກິຣິຍາທີ່ສອດຄ່ອງກັບເນື້ອໃນບົດປະພັນ ແລະ ວັດທະນະທຳ-ຮີດຄອງປະເພນີອັນດີງາມ ຂອງ ຊາດລາວ.

## ໝວດທີ VII
## ວ່າດ້ວຍການແບ່ງຂັ້ນຄຸ້ມຄອງ

**ມາດຕາ 23**: ບັນດາເນື້ອໃນຂອງບົດປະພັນທຸກປະເພດ ທີ່ຈະນຳໄປຜະລິດ ແລະ ຈຳໜ່າຍເຜີຍແຜ່ຮັບໃຊ້ສັງຄົມ, ຮັບໃຊ້ສື່ມວນຊົນ ເຊັ່ນ: ໂທລະພາບ-ວິທະຍຸກະຈາຍສຽງ ນັບທັງນຳໃຊ້ຢູ່ພາຍໃນກົມກອງ-ຂະແໜງການ ແລະ ທ້ອງຖິ່ນຂອງຕົນ ຕ້ອງຜ່ານການກວດກາ ແລະ ອະນຸມັດຈາກພະແນກຖະແຫລງຂ່າວ ແລະ ວັດທະນະທຳຂອງແຂວງ, ກຳແພງນະຄອນ

ແລະ ເຂດພິເສດ ຢ່າງຖືກຕ້ອງ ຈາກນັ້ນຈຶ່ງລາຍງານ ແລະ ຂໍອະນຸມັດຢ່າງເປັນທາງການ ຈາກ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທໍາ.

**ມາດຕາ 24**: ພະແນກຖະແຫລງຂ່າວ ແລະ ວັດທະນະທໍາແຂວງ, ກໍາແພງນະຄອນ, ເຂດພິເສດ, ຫ້ອງການຖະແຫລງຂ່າວ-ວັດທະນະທໍາຂັ້ນເມືອງ ແລະ ຂັ້ນບ້ານ ໃນທົ່ວປະເທດ ມີໜ້າທີ່ປະສານ ສົມທົບກັບອໍານາດການປົກຄອງຂັ້ນຕ່າງໆ ເພື່ອຈັດຕັ້ງການຄຸ້ມຄອງກວດກາການເຄື່ອນ ໄຫວຂອງບຸກຄົນ, ຫ້າງຮ້ານ ບໍລິສັດທີ່ຜະລິດ ແລະ ຈໍາໜ່າຍຜະລິດຕະພັນກາແຊັດ-ແຜ່ນ ສຽງ-ຟີມຮູບເງົາ, ຫ້ອງອັດສຽງ, ຫ້ອງອັດກ່າຍ, ຫ້ອງຖ່າຍທໍາ ແລະ ຕັດຕໍ່ພາບ-ສຽງ ຢູ່ພາຍ ໃນທ້ອງຖິ່ນ ຂອງຕົນ ຕາມຂໍ້ກໍານົດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 25:** ການເຄື່ອນໄຫວຂອງບໍລິສັດຕ່າງປະເທດ ທີ່ມີຂະໜາດໃຫຍ່ ( ລະດັບຂ້າມຊາດ ) ຂຶ້ນກັບການຄຸ້ມຄອງ ຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທໍາ. ໂດຍມີການປະສານສົມທົບ ກັບພະແນກຖະແຫລງຂ່າວ ແລະ ວັດທະນະທໍາຂອງແຂວງ, ກໍາແພງນະຄອນ ແລະ ເຂດພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ.

## ໝວດທີ VIII
## ວ່າດ້ວຍນະໂຍບາຍຕໍ່ຜູ້ທີ່ມີຜົນງານດີເດັ່ນ ແລະ ມາດຕະການຕໍ່ຜູ້ມີເຈດຕະນາລ່ວງລະເມີດ ຂໍ້ກໍານົດສະບັບນີ້

**ມາດຕາ 26:** ສິລະປິນ ຫ້າງຮ້ານ ແລະ ບໍລິສັດ ທີ່ປະກອບອາຊີບປະດິດສ້າງຜະລິດ ແລະ ຈໍາໜ່າຍກະແຊັດ-ແຜ່ນສຽງ-ຟີມຮູບເງົາ, ຫ້ອງອັດສຽງ, ຫ້ອງອັດກ່າຍ, ຫ້ອງຕັດຕໍ່ພາບ-ສຽງ ແລະ ອື່ນໆ ທີ່ປະຕິບັດຕາມຂໍ້ກໍານົດສະບັບນີ້ຢ່າງເຂັ້ມງວດ, ຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ໄດ້ຮັບການອໍານວຍຄວາມສະດວກຕ່າງໆ ຢ່າງເໝາະສົມ.

**ມາດຕາ 27**: ສິນລະປິນຫ້າງຮ້ານ ແລະ ບໍລິສັດທີ່ບໍ່ປະຕິບັດຕາມຂໍ້ກໍານົດສະບັບນີ້ ຈະບໍ່ໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງໃນທາງກົດໝາຍ

- ຜູ້ທີ່ມີເຈດຕະນາມ້າງເພທໍາລາຍ ແລະ ລ່ວງລະເມີດຕໍ່ຂໍ້ກໍານົດສະບັບນີ້ ຈະຖືກສຶກສາອົບຮົມ ກ່າວເຕືອນ ເຮັດບົດບັນທຶກ ປັບໃໝ ແລະ ຢຸດຕິການເຄື່ອນໄຫວການດໍາເນີນທຸລະກິດ ຢ່າງສິ້ນເຊີງ, ພ້ອມທັງປະກອບສໍານວນຄະດີຟ້ອງຂຶ້ນສານຕາມກົດໝາຍ;
- ກະທໍາຜິດຄັ້ງທີໜຶ່ງ: ສຶກສາອົບຮົມ, ກ່າວເຕືອນ ແລະ ສ້າງບົດບັນທຶກ ຊ່ວຍຈໍາ;
- ກະທໍາຜິດຄັ້ງທີສອງ: ກ່າວເຕືອນ, ສ້າງບົດບັນທຶກຊ່ວຍຈໍາ ແລະ ປັບໃໝ 100% ຂອງມູນ ຄ່າບົດປະພັນ, ຜະລິດຕະພັນ ແລະ ການເຄື່ອນໄຫວນັ້ນ;
- ກະທໍາຜິດຄັ້ງທີສາມ: ປັບໃໝ, ຖອນໃບອະນຸຍາດ, ຢຶດທະບຽນການຄ້າ, ປະຕັງ, ພາສີ ພ້ອມທັງເຄື່ອງອຸປະກອນຮັບໃຊ້ການຜະລິດຕ່າງໆ, ສັ່ງຢຸດຕິການເຄື່ອນ

ໄຫວທາງທຸລະກິດ ຂອງຜູ້ກ່ຽວຢ່າງສິ້ນເຊີງ, ປະກອບສຳນວນຄະດີຟ້ອງຂຶ້ນສານ ເພື່ອດຳເນີນຄະດີຕາມກົດໝາຍ.

**ມາດຕາ 28:** ມອບໃຫ້ຫ້ອງການກະຊວງ-ກົມກວດກາ, ກົມສິລະປະກຳ ພ້ອມພະແນກຖະແຫລງຂ່າວ ແລະ ວັດທະນະທຳຂອງແຂວງ-ກຳແພງນະຄອນ ແລະ ເຂດພິເສດປະສານສົມທົບ ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ່າງໆໃນທົ່ວປະເທດຈັດຕັ້ງປະຕິບັດຕາມ ຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 29:** ຂໍ້ກຳນົດກົດລະບຽບອື່ນໆ ທີ່ມີເນື້ອໃນຂັດກັບຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ມາດຕາ 30**: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ,ວັນທີ 13 / 11 / 01

ລັດຖະມົນຕີວ່າການ

**ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ**

**ພັນດວງຈິດ ວົງສາ**

( ເຊັນ ແລະ ຈ້ຳກາແລ້ວ )